## ປະກາດແຈ້ງການ

ທະນາຄານ ແຫ່ງ ສປປ ລາວ (ທຫລ) ມີຄວາມຍິນດີແຈ້ງມາຍັງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ (ສກຈຮ) ກ່ຽວກັບ ການຮັບໜັງສືສະແດງເຈດຈຳນົງ (EOI) ໃນການສະເໜີກູ້ຢືມຈາກ “ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ” (LAFF) ທີ່ໄດ້ຮັບທຶນສະໜັບສະໜູນຈາກ KfW ປະເທດ ເຢຍລະມັນ, ຊຶ່ງໄດ້ປະກາດຢ່າງເປັນທາງການ ໃນມື້ວັນທີ **19 ກຸມພາ 2021**.

ກອງທຶນສົ່ງເສີມການເຂົ້າເຖິງແຫຼ່ງທຶນ ໃນ ສປປ ລາວ (ຫຼື *LAFF*) ແມ່ນສ້າງຕັ້ງຂຶ້ນໃນປີ 2014, ຊຶ່ງໄດ້ຮັບທຶນສະໜັບສະໜູນຈາກ ກະຊວງ ຮ່ວມມື ແລະ ການພັດທະນາດ້ານເສດຖະກິດ (BMZ) ຂອງປະເທດສະຫະພັນເຢຍລະມັນ ໂດຍຜ່ານ ທະນາຄານພັດທະນາຂອງປະເທດເຢຍລະມັນ ຫຼື KfW, ເປົ້າໝາຍຂອງກອງທຶນດັ່ງກ່າວແມ່ນເພື່ອແນ່ໃສ່ການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງ ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນເຂດຊົນນະບົດຂອງ ສປປ ລາວ, ຊຶ່ງທຶນເບື້ອງຕົ້ນແມ່ນ 3 ລ້ານຢູໂຣ. ຜ່ານມາ ກອງທຶນ LAFF ໄດ້ໃຫ້ການປ່ອຍກູ້ໃຫ້ແກ່ ທະນາຄານທຸລະກິດ ແລະ ສກຈຮ ເພື່ອນຳໄປປ່ອຍກູ້ຕໍ່ໃຫ້ແກ່ MSMEs ຫຼາຍກ່ວາ 2,400 ຫົວໜ່ວຍ, ໃນນັ້ນ ມີຫຼາຍຫົວໜ່ວຍ MSMEs ແມ່ນຖືວ່າເປັນການເຂົ້າເຖິງແຫຼ່ງທຶນຄັ້ງທຳອິດ ຂອງເຂົາເຈົ້າຈາກກອງທຶນດັ່ງກ່າວ.

ຈາກຜົນສຳເລັດຂອງໂຄງການ LAFF ໄລຍະ I, ລັດຖະບານປະເທດເຢຍລະມັນ ຈຶ່ງສືບຕໍ່ໃຫ້ທຶນ ສະໜັບສະໜູນເພີ່ມຕື່ມອີກ 6 ລ້ານຢູໂຣ ແລະ ອີກ 0.8 ລ້ານຢູໂຣເປັນທຶນຊ່ວຍເຫຼືອດ້ານ ວິຊາການໃຫ້ແກ່ ໂຄງການ LAFF ໄລຍະ II, ຊຶ່ງໄດ້ຈັດຕັ້ງປະຕິບັດຢ່າງເປັນທາງການແຕ່ວັນທີ 02 ມີນາ 2020.

ລາຍລະອຽດເພີ່ມຕື່ມ ກ່ຽວກັບ ການສະເໜີເຈດຈຳນົງ (EOI) ແມ່ນປະກາດຢູ່ເວບໄຊຂອງ ທຫລ (www.bol.gov.la) ໃນມື້ວັນທີ **19 ກຸມພາ 2021**, ຊຶ່ງເນື້ອໃນລາຍລະອຽດຈະມີ: ເງື່ອນໄຂໃນການກູ້ຢືມ, ເງື່ອນໄຂຂອງຜູ້ທີ່ຈະສາມາດ ກູ້ຢືມໄດ້, ແບບຟອມສະໝັກ ແລະ ເອກະສານຕ່າງໆທີ່ຈະໄດ້ປະກອບໃສ່ໃນເອກະສານສະເໜີກູ້ຢືມ.

ທາງໂຄງການຈະໄດ້ຈັດສຳມະນາອະທິບາຍ ກ່ຽວກັບ ການສະໝັກໃນມື້ **ວັນທີ 23 ກຸມພາ 2021 ເວລາ 9 ໂມງເຊົ້າ, ທີ່ຫ້ອງປະຊຸມ ຊັ້ນ 4 ຂອງ ທະນາຄານ ແຫ່ງ ສປປ ລາວ, ໂດຍການເປັນປະທານຂອງ ທ່ານ ຄຳແກ້ວ ວິສີສົມບັດ, ວ່າຮັກສາການຫົວໜ້າກົມບໍລິການທະນາຄານ, ຜູ້ອຳນວຍການກອງທຶນ LAFF.**

ການ ຮ່ວມມື ເຢຍລະມັນ
DEUTSCHE ZUSAMMENARBEIT

KFW

AFC
AGRICULTURE & FINANCE CONSULTANTS

ພ້ອມນີ້, ຈະເຜີຍແຜ່ຜ່ານທາງ ອອນໄລ (online) ໃນມື້ **ວັນທີ 25 ກຸມພາ 2021, ເວລາ 14:00**, ທ່ານໃດສົນໃຈເຂົ້າຮ່ວມທາງ ອອນໄລ ກະລຸນາຕິດຕໍ່ລົງທະບຽນໄດ້ທີ່ E-mail: laff.laos@gmail.com (ກະລຸນາລະບຸຊື່ອົງກອນ, ຊື່ຜູ້ຕິດຕໍ່, E-mail ແລະ ເບີໂທ) ເພື່ອສາມາດເຊື່ອມຕໍ່ກັບປະຊຸມທາງ ອອນໄລ.

ຜູ້ສະໝັກສາມາດສະເໜີຊັກຖາມຂໍ້ມູນລະອຽດເພີ່ມຕື່ມຈາກທາງໂຄງການໄດ້ພາຍໃນ ວັນທີ 1 ມີນາ 2021 ໄດ້ທີ່ laff.laos@gmail.com, ທາງໂຄງການຕອບກັບພາຍໃນໜຶ່ງອາທິດ.

ໝົດເຂດຮັບຈົດໝາຍສະແດງເຈດຈຳນົງ ສຳລັບ ທະນາຄານທຸລະກິດ ແລະ ສກຈຮ (ພາກສ່ວນອື່ນ ບໍ່ສາມາດສະໝັກໄດ້) ແມ່ນ **ວັນທີ 22 ມີນາ 2021, ເວລາ 16:00 ໂມງ (ແລງ)**. ໂຄງການ LAFF ຈະທົບທວນໃບສະໝັກ ແລະ ລົງໄປປະເມີນຄວາມພ້ອມ (due diligence) ເພື່ອປະເມີນຄວາມ ສາມາດໃນການກູ້ຢືມຂອງແຕ່ລະຜູ້ສະໝັກ. ຄາດວ່າໂຄງການປະກາດຜົນການຕົກລົງອະນຸມັດເງິນກູ້ ພາຍໃນ**ທ້າຍເດືອນ ເມສາ 2021** ແລະ ຈະເລີ່ມເບີກຈ່າຍທຶນກູ້ຢືມໃນເດືອນ **ພຶດສະພາ 2021.**

ການສົ່ງເສີມຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ແມ່ນນະໂຍບາຍ ບູລິມະສິດຂອງລັດຖະບານ ແຫ່ງ ສປປ ລາວ, ເນື່ອງຈາກ MSMEs ມີບົດບາດສຳຄັນໃນການ ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນລາວ. ຜ່ານການຍົກລະດັບການເຂົ້າເຖິງ ການບໍລິການເງິນກູ້ໄລຍະຍາວກ່ວາ ຈະເຮັດໃຫ້ຫົວໜ່ວຍ MSMEs ສາມາດນຳໃຊ້ເງິນກູ້ດັ່ງກ່າວໄປ ລົງທຶນຂະຫຍາຍກິດຈະການຂອງເຂົາເຈົ້າ ເພື່ອປະກອບປະກອບສ່ວນ ເຂົ້າໃນການຂະຫຍາຍຕົວ ທາງດ້ານເສດຖະກິດຢ່າງມີຄວາມສະເໝີພາບຂອງ ສປປ ລາວ.

ລາຍລະອຽດເພີ່ມຕື່ມ ກະລຸນາຕິດຕໍ່ laff.laos@gmail.com